ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

*******************

ແຂວງບໍລິຄໍາໄຊ

ເລກທີ 006/ຂບຊ

ບໍລິຄໍາໄຊ, ວັນທີ 07 FEB 2013

## ແຈ້ງການ

ເຖິງ: ບັນດາເມືອງ, ພະແນກການ, ກົມກອງ, ຫ້ອງການ, ອົງການຈັດຕັ້ງມະຫາຊົນ, ລັດວິສາຫະກິດ, ບໍລິສັດ, ຫົວໜ່ວຍທຸລະກິດຕ່າງໆ ຕະຫຼອດຮອດພໍ່ແມ່ປະຊາຊົນ ພາຍໃນແຂວງບໍລິຄໍາໄຊ.

ເລື່ອງ: ການຄຸ້ມຄອງ ແລະ ກວດກາ ການແລກປ່ຽນເງິນຕາຕ່າງປະເທດ ໃຫ້ເຄື່ອນໄຫວຖືກຕ້ອງ ແລະ ສອດຄ່ອງຕາມລະບຽບກົດໝາຍ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ເລກທີ 05/ສພຊ, ລົງວັນທີ 14 ຕຸລາ 1999
- ອີງຕາມ ລັດຖະບັນຍັດຂອງ ປະທານປະເທດ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ ສະບັບເລກທີ 01/ປປທ, ລົງວັນທີ 17 ມີນາ 2008.
- ອີງຕາມ ໃບສະເໜີຂອງ ທະນາຄານແຫ່ງ ສປປ ລາວ ພາກກາງ ທີ່ແຂວງສະຫວັນນະເຂດ ສະບັບເລກທີ 16/ທຫລ.ສຂ, ລົງວັນທີ 11 ມັງກອນ 2013.

### ເຈົ້າແຂວງ-ແຂວງບໍລິຄໍາໄຊ ອອກແຈ້ງການດັ່ງນີ້:

1. ໃຫ້ເມືອງ ແລະ ຂະແໜງການທີ່ກ່ຽວຂ້ອງຂອງແຂວງ ເອົາໃຈໃສ່ເພີ່ມທະວີໃນການຄຸ້ມຄອງ ແລະ ກວດກາການແລກປ່ຽນເງິນຕາຕ່າງປະເທດ ຂອງບັນດາບຸກຄົນ, ນິຕິບຸກຄົນ, ບໍລິສັດ, ຫ້າງຮ້ານຕ່າງໆ ແລະ ການຈັດຕັ້ງລັດທຸກພາກສ່ວນພາຍໃນແຂວງ ທີ່ມີການເຄື່ອນໄຫວບໍ່ຖືກຕ້ອງຕາມກົດໝາຍ ພ້ອມດຽວກັນນັ້ນຖ້າບັນດາບຸກຄົນ, ນິຕິບຸກຄົນ, ບໍລິສັດ, ຫ້າງຮ້ານຕ່າງໆພາຍໃນແຂວງ ທີ່ມີຄວາມສົນໃຈໃນການດໍາເນີນທຸລະກິດແລກປ່ຽນເງິນຕາຕ່າງປະເທດ ແມ່ນໃຫ້ໄປພົວພັນຂໍອະນຸຍາດກັບທະນາຄານແຫ່ງ ສປປ ລາວ ປະຈໍາພາກກາງ ທີ່ແຂວງສະຫວັນນະເຂດ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ.
2. ສໍາລັບບຸກຄົນ, ນິຕິບຸກຄົນ, ຫ້າງຮ້ານຕ່າງໆພາຍໃນແຂວງ ທີ່ເຄື່ອນໄຫວບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງຕາມລະບຽບກົດໝາຍ ຖ້າຫາກເຈົ້າໜ້າທີ່ກວດກາພົບເຫັນການແລກປ່ຽນຊະຊາຍ ບໍ່ຖືກຕ້ອງນັ້ນ ແມ່ນມອບໃຫ້ພາກສ່ວນທີ່ກ່ຽວຂ້ອງປະສານສົມທົບກັບອໍານາດການປົກຄອງທ້ອງຖິ່ນ ເປັນຜູ້ສຶກສາອົບຮົມ, ກ່າວເຕືອນ ແລະ ປັບໃໝຕາມລະບຽບການ, ພ້ອມທັງໃຫ້ຢຸດເຊົາການກະທໍາດັ່ງກ່າວທັນທີ.
3. ສໍາລັບຮ້ານແລກປ່ຽນເງິນຕາຕ່າງປະເທດເອກະຊົນພາຍໃນແຂວງ ຕ້ອງໄປແຈ້ງຂຶ້ນທະບຽນ ແລະ ຂໍອະນຸຍາດກ່ຽວກັບການດໍາເນີນທຸລະກິດດັ່ງກ່າວກັບ ທະນາຄານແຫ່ງ ສປປ ລາວ ປະຈໍາພາກກາງ ທີ່ແຂວງສະຫວັນນະເຂດ ໃຫ້ຖືກຕ້ອງຕາມຂັ້ນຕອນ ແລະ ລະບຽບການທີ່ວາງອອກ.

4. ຫ້າມທຸກໆກໍລະນີ/ທຸລະກໍາ ການດໍາເນີນທຸລະກິດແລກປ່ຽນເງິນຕາຕ່າງປະເທດ ໂດຍບໍ່ໄດ້ຮັບອະນຸຍາດ ຈາກພາກສ່ວນທີ່ກ່ຽວຂ້ອງຢ່າງເດັດຂາດ.

5. ມອບໃຫ້ທະນາຄານແຫ່ງ ສປປ ລາວ ປະຈໍາພາກກາງ ທີ່ແຂວງສະຫວັນນະເຂດ ເປັນໃຈກາງປະສານສົມທົບກັບບັນດາພະແນກການທີ່ກ່ຽວຂ້ອງເປັນຕົ້ນ: ພະແນກສ່ວຍສາອາກອນແຂວງ, ພະແນກອຸດສາຫະກໍາ-ການຄ້າແຂວງ, ໄອຍະການ-ສານແຂວງ, ເຈົ້າໜ້າທີ່ຕໍາຫຼວດເສດຖະກິດ ແລະ ອໍານາດການປົກຄອງທ້ອງຖິ່ນທຸກຂັ້ນ ເພື່ອຈັດຕັ້ງເປັນກໍາມະການລົງກວດກາບັນດາກິດຈະການເຫຼົ່ານັ້ນ ໃຫ້ດໍາເນີນໄປຕາມລະບຽບກົດໝາຍ, ລັດຖະບັນຍັດ, ຂໍ້ກໍານົດ, ບົດແນະນໍາ ແລະ ກົດລະບຽບທີ່ວາງອອກຢ່າງເຂັ້ມງວດ ແລະ ພ້ອມທັງເປັນການຊຸກຍູ້ ໃນການຈັດເກັບງົບປະມານຂອງລັດຕື່ມອີກ.

ດັ່ງນັ້ນ, ຈິ່ງແຈ້ງການມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ເຈົ້າແຂວງ-ແຂວງບໍລິຄໍາໄຊ.

ປານ ນ້ອຍມະນີ
Pan NOYMANY